ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ປາຖະກະຖາ ວັນສ້າງຕັ້ງແມ່ຍິງສາກົນ 8 ມີນາ ຄົບຮອບ 109 ປີ




ໃນວັນທີ 15 ມີນາ 2019 ນີ້, ຄະນະສະຫະພັນແມ່ຍິງທະນາຄານແຫ່ງ ສປປ ລາວ ໄດ້ຈັດຕັ້ງພິທີປາຖະກະຖາວັນສ້າງຕັ້ງວັນແມ່ຍິງສາກົນ 8 ມີນາ ( 8 ມີນາ 1910 - 8 ມີນາ 2019 ) ຄົບຮອບ 109 ປີ. ທີ່ສະໂມສອນສະຖາບັນການທະນາຄານ ນະຄອນຫຼວງວຽງຈັນ, ໂດຍການເຂົ້າຮ່ວມຂອງທ່ານນາງ ສີລີກິດ ບຸບຜາ ຮອງປະທານຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ ແລະ ທ່ານຄໍາວິງ ທິບພະວົງ ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ, ພ້ອມດຽວກັນນັ້ນກໍ່ມີຄະນະນໍາຂັ້ນສູງຂອງທະນາຄານແຫ່ງ ສປປ ລາວ, ຄະນະແມ່ຍິງຮາກຖານທະນາຄານແຫ່ງ ສປປ ລາວ ເຊັ່ນ: ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ, ທະນາຄານ ສົ່ງເສີມກະສິກໍາ, ທະນາຄານ ພັດທະນາລາວ, ທະນາຄານ ນະໂຍບາຍ, ສະຖາບັນການທະນາຄານ, ທະນາຄານ ລາວ-ຫວຽດ, ທະນາຄານ ເອັສທີ, ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບລາວ ມີຈໍານວນທັງໝົດ 400 ສະຫາຍ.

ຈຸດປະສົງໃນການປາຖະກະຖາຄັ້ງນີ້ເປັນການທົບທວນຫວນຄືນປະຫວັດ ແລະ ຄວາມເປັນມາຂອງວັນແມ່ຍິງສາກົນ ທັງນີ້ກໍ່ເພື່ອໃຫ້ພະນັກງານ ແລະ ສະມາຊິກອົງການຈັດຕັ້ງມະຫາຊົນໂດຍສະເພາະຂະແໜງການທະນາຄານໄດ້ຮັບຮູ້ເຂົ້າໃຈຄວາມໝາຍຄວາມສໍາຄັນຂອງສະຫະພັນແມ່ຍິງຂັ້ນຕ່າງໆ ພາຍໃຕ້ 03 ຫົວຂໍ້ຄື: ① ປະຫວັດຄວາມເປັນມາຂອງວັນທີ 8 ມີນາ; ② ບັນດາອົງການຈັດຕັ້ງ, ສົນທິສັນຍາ, ຖະແຫຼງການ ແລະ ປະຊຸມຕ່າງໆ ກ່ຽວກັບແມ່ຍິງໃນລະດັບສາກົນ, ພາກພື້ນ ອາຊຽນ ແລະ ③ນະໂຍບາຍ ແລະ ກົນໄກສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ໃນ ສປປ ລາວ.



# ຂ່າວ-ພາບ: ທ ສົມພິດ ທຳມະວົງ